# ຮູບການແກ້ໄຂການກະທຳຜິດຂອງເດັກ

ອົງການແກ້ໄຂທາງບໍລິຫານ ປະກອບດ້ວຍ ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ; ຫ້ອງການຍຸຕິທຳເມືອງ, ເທດສະບານ; ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ

## ການກະທຳຜິດຂອງເດັກທີ່ເບົາບາງ



## ການກະທຳຜິດຂອງເດັກທີ່ຮ້າຍແຮງ



ອົງການແກ້ໄຂຄະດີເດັກຕາມຂະບວນການຍຸຕິທຳ ປະກອບດ້ວຍ ອົງການສືບສວນ-ສອບສວນ (ໜ່ວຍງານສືບສວນ-ສອບສວນຄະດີເດັກ); ອົງການໄອຍະການປະຊາຊົນ (ໜ່ວຍງານໄອຍະການເດັກ) ແລະ ສານປະຊາຊົນ (ຄະນະສານເດັກ)

**ການໄກ່ເກ່ຍຂອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ**



ເມື່ອຄູ່ກໍລະນີບໍ່ພໍໃຈຕໍ່ຜົນຂອງການໄກ່ເກ່ຍໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການຍຸຕິທຳເມືອງ, ເທດສະບານ ເພື່ອທຳການໄກ່ເກ່ຍຂັ້ນຕໍ່ໄປ.

**ການໄກ່ເກ່ຍຂອງຫ້ອງການຍຸຕິທຳເມືອງ, ເທດສະບານ**



ຜ່ານການໄກ່ເກ່ຍຢູ່ຫ້ອງການຍຸຕິທຳເມືອງ, ເທດສະບານ ຫາກຄູ່ກໍລະນີຍັງບໍ່ພໍໃຈ ຫຼື ບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ຍື່ນຄຳຮ້ອງຕໍ່ອົງການສືບສວນ-ສອບສວນ (ໜ່ວຍງານຄະດີເດັກ) ເພື່ອທຳການໄກ່ເກ່ຍໃນຂັ້ນຕໍ່ໄປ

**ການໄກ່ເກ່ຍຂອງອົງການສືບສວນ-ສອບສວນ (ໜ່ວຍງານຄະດີເດັກ)**



ເມື່ອຄູ່ກໍລະນີບໍ່ພໍໃຈຕໍ່ຜົນຂອງການໄກ່ເກ່ຍໃຫ້ຍື່ນຄຳຮ້ອງຕໍ່ອົງການໄອຍະການປະຊາຊົນ (ໜ່ວຍງານໄອຍະການເດັກ) ເພື່ອທຳການໄກ່ເກ່ຍໃນຂັ້ນຕໍ່ໄປ.

**ການໄກ່ເກ່ຍຂອງອົງການໄອຍະການປະຊາຊົນ (ໜ່ວຍງານໄອຍະການເດັກ)**



ເດັກທີ່ມີອາຍຸຕໍ່າກວ່າ 15 ປີ ທີ່ໄດ້ມີການກະທຳຊຶ່ງເປັນອັນຕະລາຍຕໍ່ສັງຄົມ ຫຼື ໄດ້ມີການກະທຳຜິດທາງອາຍາທີ່ຮ້າຍແຮງ, ເປັນການກະທຳຜິດເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມກ້ອນ

ເດັກທີ່ມີອາຍຸ 15 ປີ ຫາຕໍ່າກວ່າ 18 ປີ ກະທຳຜິດໃນສະຖານທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີລົງມາ, ຊຶ່ງເປັນການກະທຳຜິດຄັ້ງດຽວ

ເດັກທີ່ມີອາຍຸ 15 ປີ ຫາຕໍ່າກວ່າ 18 ປີ ກະທຳຜິດໃນສະຖານທີ່ກົດໝາຍກຳນົດໂທດຊຶ່ງຕັດອິດສະລະພາບແຕ່ 3 ປີຂຶ້ນໄປ

ເດັກທີ່ມີອາຍຸແຕ່ 15 ປີ ຫາຕໍ່າກວ່າ 18 ປີ ກະທຳຜິດໃນສະຖານທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີ ລົງມາ ແຕ່ເປັນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ

**ເຈົ້າໜ້າທີ່ຮັບແຈ້ງຄວາມ**



**ການຈັບຕົວຕ້ອງມີຄຳສັ່ງ**



**ການກັກຂັງເດັກຕ້ອງແຍກອອກຈາກການກັກຂັງກັບຜູ້ໃຫຍ່**



**ການເອົາຄຳໃຫ້ການເດັກຕ້ອງມີພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງເຂົ້າຮ່ວມນຳ**



ອົງການສືບສວນ-ສອບສວນ ຂໍຄຳສັ່ງເປີດການສືບສວນ-ສອບສວນ ເພື່ອເອົາຄຳໃຫ້ການ ແລະ ນຳໃຊ້ມາດຕະການສະກັດກັ້ນ ຈາກຫົວໜ້າອົງການໄອຍະການປະຊາຊົນ ແລ້ວສະຫຼຸບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ

**ອົງການໄອຍະການປະຊາຊົນ ຮັບ ແລະ ການຄົ້ນຄວ້າສຳນວນຄະດີ**



ອົງການໄອຍະການປະຊາຊົນ (ໜ່ວຍງານໄອຍະການເດັກ) ຈະຄົ້ນຄວ້າສຳນວນຄະດີ ເພື່ອສະຫຼຸບວ່າມີ ຫຼື ບໍ່ມີພື້ນຖານການກະທຳຜິດ ຖ້າມີກໍຈະດຳເນີນການສັ່ງຟ້ອງຕໍ່ສານປະຊາຊົນ

ຖ້າການໄກ່ເກ່ຍຂັ້ນສຸດທ້າຍຍັງບໍ່ສຳເລັດ ແມ່ນສົ່ງໃຫ້ສານປະຊາຊົນ (ຄະນະສານເດັກ) ພິຈາລະນາຕັດສິນ

**ການພິຈາລະນາຕັດສິນຂອງສານປະຊາຊົນ (ຄະນະສານເດັກ)**



**ສະໜັບສະໜູນໂດຍ:**

UNDP Empowered lives, Resilient nations

Liberté · Égalité · Fraternité RÉPUBLIQUE FRANÇAISE

**ຈັດພິມໂດຍ: ກົມໂຄສະນາອົບຮົມກົດໝາຍ ຮ່ວມກັບ ແຜນງານທີ 4**